ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

1369

ເລກທີ........../ກຊສ

ນະຄອນຫຼວງວຽງຈັນ, ວັນທີ..28..ມີນາ..2018..

# ຂໍ້ຕົກລົງ

## ວ່າດ້ວຍຂໍ້ຫ້າມ ແລະ ວິໄນ ຂອງພະນັກງານ-ລັດຖະກອນ ຂະແໜງທີ່ດິນ

- ອີງຕາມ ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ພຊສ, ລົງວັນທີ 18 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງເລກທີ 27/ພຊສ, ລົງວັນທີ 18 ທັນວາ 2012.

## ລັດຖະມົນຕີ ຕົກລົງ :

**ມາດຕາ 1 ຈຸດປະສົງ**

ເພື່ອຍົກສູງຄວາມຮັບຜິດຊອບ ຕໍ່ໜ້າທີ່ການເມືອງ ຄວາມເປັນແບບຢ່າງນຳພາ ຂອງພະນັກງານ ລັດຖະກອນຂະແໜງທີ່ດິນ, ມີລະບຽບວິໄນ, ຈັນຍາບັນ-ຈັນຍາທຳ ແລະ ນໍ້າໃຈຮັບໃຊ້ຊາດ, ຮັບໃຊ້ ປະຊາຊົນ ມີຄວາມໂປ່ງໃສ, ເຂັ້ມງວດ ໃນການປະຕິບັດກົດຫມາຍ ແລະ ລະບຽບການທີ່ກ່ຽວຂ້ອງ; ສະກັດກັ້ນ, ຕ້ານການສໍ້ລາດບັງຫລວງ, ພະຍາດອາດຍາສິດ ແລະ ປະກົດການຫຍໍ້ທໍ້ດ້ານຕ່າງໆ ຕາມຄຳ ຂວັນທີ່ວ່າ "**ເຮັດໃຫ້ດີ, ເຮັດໃຫ້ໄວ, ເຮັດໃຫ້ຫຼາຍ ແລະ ເຮັດໃຫ້ຖືກຕ້ອງຕາມກົດໝາຍ**".

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະແຕ່ ພະນັກງານ - ລັດຖະກອນ ຂອງຂະແໜງທີ່ດິນ ແຕ່ສູນກາງ ລົງຮອດຂັ້ນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

**ມາດຕາ 3 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ**

ພະນັກງານ - ລັດຖະກອນ ຂອງຂະແໜງທີ່ດິນ ທີ່ປະຈຳການ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ນອກຈາກປະຕິບັດຕາມຂໍ້ຫ້າມ ທີ່ກຳນົດໃນກົດຫມາຍ ແລະ ລະບຽບການອື່ນໆແລ້ວ ຕ້ອງປະຕິບັດຕາມ ຂໍ້ຫ້າມທີ່ຕິດພັນກັບວຽກງານຂະແໜງທີ່ດິນສະເພາະດັ່ງນີ້:

1. ຫ້າມສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່, ເມີນເສີຍຕໍ່ການປະຕິບັດໜ້າທີ່, ກົດໜ່ວງ ຫຼື ຖ່ວງດຶງ ການຄົ້ນຄວ້າເອກະສານ, ທວງເອົາ, ຂໍເອົາ ແລະ ຮັບສິນບົນຈາກເຈົ້າຂອງສິດໃຊ້ ຫຼື ສິດນຳໃຊ້ທີ່ດິນ, ເຈົ້າຂອງໂຄງການ ແລະ ກິດຈະການຕ່າງໆກ່ຽວກັບທີ່ດິນ;
2. ຫ້າມສົມຮູ້ຮ່ວມຄິດກັບບຸກຄົນ ຫຼື ນິຕິບຸກຄົນ ເພື່ອລັກໂລບ ຫຼື ສໍ້ໂກງ, ຈັບຈອງ, ບຸກເບີກ ແລະ ຄອບ ຄອງທີ່ດິນຂອງລັດ ຫຼື ຂອງບຸກຄົນ ເພື່ອຜົນປະໂຫຍດສ່ວນຕົວ; ຄອບຄົວ, ຍາດພີ່ນ້ອງ, ຈຸ້ມເຈື້ອ, ພັກພວກ ຫຼື ໝູ່ຄະນະ;
3. ຫ້າມເປັນນາຍໜ້າ ໃນການແລ່ນເອກະສານທີ່ດິນ ໃຫ້ບຸກຄົນ ແລະ ນິຕິບຸກຄົນ.



4. ຫ້າມຍັກຍອກສໍ້ໂກງເອົາທີ່ດິນ ຂອງລັດ, ບຸກຄົນ ແລະ ນິຕິບຸກຄົນ.
5. ຫ້າມຍ້າຍ, ປ່ຽນແປງ ຫຼື ທຳລາຍຫຼັກເຂດແດນທີ່ດິນ ໂດຍເຈົ້າຂອງດິນຂ້າງຄຽງ ບໍ່ໄດ້ເຂົ້າຮ່ວມ ເພື່ອ ຫວັງທຳລາຍຫຼັກຖານ.
6. ຫ້າມທຳລາຍ ຫຼື ປອມແປງເອກະສານຫລັກຖານຂໍ້ມູນ ເຊັ່ນ: ປອມແປງລາຍເຊັນ, ຕາປະທັບ, ສຳ ນວນເອກະສານທີ່ດິນ ແລະ ບັນຊີຂໍ້ມູນທີ່ດິນ ທີ່ຢັ້ງຢືນເປັນຫຼັກຖານການວັດແທກທີ່ດິນ, ການຂຶ້ນ ທະບຽນທີ່ດິນ, ອອກໃບຕາດິນ, ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ, ຂໍ້ມູນກ່ຽວກັບການສຳຫຼວດ ວັດແທກທີ່ດິນ, ບັນຊີລາຍຮັບ-ລາຍຈ່າຍ ກ່ຽວກັບທີ່ດິນ ແລະ ອື່ນໆ.
7. ຫ້າມປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການ ຈັດຕັ້ງ ທີ່ເຄື່ອນໄຫວກ່ຽວກັບວຽກງານທີ່ດິນ.

**ມາດຕາ 4 ນະໂຍບາຍຍ້ອງຍໍ**

ພະນັກງານ-ລັດຖະກອນ ຂອງຂະແໜງທີ່ດິນ ຜູ້ໃດປະຕິບັດໜ້າທີ່ ດ້ວຍຄວາມຮັບຜິດຊອບ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຕາມເນື້ອໃນຂໍ້ແຂ່ງຂັນ, ປະຕິບັດບັນດາຂໍ້ຫ້າມ ຕາມຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມລະບຽບການ.

**ມາດຕາ 5 ມາດຕະການວິໄນ**

ພະນັກງານ-ລັດຖະກອນ ຂອງຂະແໜງທີ່ດິນ ຫາກມີພຶດຕິກຳ ຫຼື ການກະທຳ ທີ່ເປັນລະເມີດກົດ ໝາຍ ແລະ ລະບຽບການ; ລະເມີດຂໍ້ຫ້າມຕາມຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດວິໄນ ຕາມແຕ່ລະດັບ ຂັ້ນ ດັ່ງນີ້ :

1. **ຂັ້ນທີໜຶ່ງ:** ຕິຕຽນ ໂດຍບັນທຶກຄວາມຜິດໄວ້ເປັນຫຼັກຖານ;
2. **ຂັ້ນທີສອງ:** ກ່າວເຕືອນ ໂດຍໃຫ້ຂຽນໃບສຳຫຼວດຕົນເອງ ແລະ ບັນທຶກຄວາມຜິດໄວ້ ເປັນ ຫຼັກຖານ;
3. **ຂັ້ນທີສາມ:** ໂຈະການເລື່ອນຂັ້ນເງິນເດືອນ ແລະ ການຍ້ອງຍໍ, ຫຼຸດຕຳແໜ່ງບໍລິຫານ ຫຼື ຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ, ປົດຕຳແໜ່ງບໍລິຫານ ພ້ອມທັງບັນທຶກໄວ້ໃນສຳ ນວນເອກະສານປະຫວັດຂອງພະນັກງານ-ລັດຖະກອນ;
4. **ຂັ້ນທີສີ່:** ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ໃນກໍລະນີ ເປັນການກະທຳຜິດທາງອາຍາ ຫຼື ເປັນການລະເມີດທາງແພ່ງ ພະນັກງານ-ລັດຖະ ກອນ ຜູ້ນັ້ນຈະຖືກດຳເນີນຄະດີ ຕາມຂະບວນການຍຸຕິທຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

1. ຄະນະພັກ, ຄະນະນຳແຕ່ລະຂັ້ນຂອງຂະແໜງທີ່ດິນ ທີ່ຂຶ້ນກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຕ່ສູນກາງຮອດທ້ອງຖິ່ນ ຕ້ອງເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ນຳໄປຈັດຕັ້ງເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ຈັດຕັ້ງ ປະຕິບັດ ໂດຍຕິດພັນກັບການດຳເນີນຊີວິດການເມືອງ ໃນແຕ່ລະເດືອນ ຂອງພັກ ແລະ ຂອງລັດ;
2. ພະນັກງານ - ລັດຖະກອນ ຂອງຂະແໜງທີ່ດິນທຸກຄົນ ມີໜ້າທີ່ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະ ບັບນີ້ ຢ່າງເຂັ້ມງວດ;
3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນ ມີໜ້າທີ່ປະກອບສ່ວນໃນການ ຕິດຕາມກວດກາ ແລະ ລາຍງານ ຫຼື ສະໜອງຂໍ້ມູນກ່ຽວກັບການປະຕິບັດບັນດາຂໍ້ຫ້າມຂອງພະນັກ



ງານ-ລັດຖະກອນ ຂອງຂະແໜງທີ່ດິນ ໃຫ້ການນຳຂະແຫນງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະຂັ້ນ ໂດຍຜ່ານຕູ້ຄຳຮ້ອງ-ຄຳສະເໜີ, ສາຍດ່ວນ 1514 ຫຼື ສະເໜີໂດຍກົງຫາ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ ຫຼື ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ເພື່ອມີມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;

4. ມອບໃຫ້ຄະນະກວດກາ, ກົມກວດກາ ແລະ ຂະແໜງກວດກາແຕ່ລະຂັ້ນ ຕິດຕາມກວດກາ ແລະ ດຳ ເນີນທຸກມາດຕະການ ເພື່ອຊຸກຍູ້ ແລະ ແກ້ໄຂຜົນ ຂອງການກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ຕາມໜ້າທີ່, ຂອບເຂດສິດຂອງຕົນຢ່າງເຂັ້ມງວດ ແລະ ມອບໃຫ້ຫ້ອງການ, ບັນດາກົມ, ກອງ, ສູນ ແລະ ສະຖາບັນ ພາຍໃນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ພະ ແນກຊັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ປະຕິບັດຂໍ້ຫ້າມສະບັບນີ້ຢ່າງເຂັ້ມ ງວດ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໄດ້ຖືກຮັບຮອງໃນກອງປະຊຸມວຽກງານທີ່ດິນທົ່ວປະເທດ ໃນວັນທີ 22 ທັນ ວາ 2017 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສົມມາດ ພົລເສນາ